facebook Log In

**MONRE ກຊສ**
May 3 ·

ກອງປະຊຸມປຶກສາຫາລືກ່ຽວກັບໂຄງການພະລັງງານລົມ ເຈືອງເຊີນ ກຳລັງຕິດຕັ້ງໄຟຟ້າ 600 ເມກາວັດ ຢູ່ແຂວງບໍລິຄຳໄຊ

ໃນວັນທີ 03 ພຶດສະພາ 2024 ທີ່ຜ່ານມາ ຢູ່ທີ່ນະຄອນຫຼວງວຽງຈັນ, ກົມສິ່ງແວດລ້ອມ (ກສລ), ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໄດ້ຈັດກອງປະຊຸມ ຮ່ວມກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ພຊສ) ແຂວງບໍລິຄຳໄຊ, ເພື່ອປຶກສາແບບມີສ່ວນຮ່ວມ ຂັ້ນສູນກາງກ່ຽວກັບບົດປະເມີນຜົນກະທົບສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ໂຄງການພະລັງງານລົມ ເຈືອງເຊີນ ກຳລັງຕິດຕັ້ງໄຟຟ້າ 600 ເມກາວັດ, ຕັ້ງຢູ່ເມືອງຄຳເກີດ ແລະ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ, ໂດຍການເປັນປະທານ ຂອງ ທ່ານ ພູວົງ ຫຼວງໄຊຊະນະ ຮອງລັດຖະມົນຕີ ກຊສ, ມີ ທ່ານ ອຸ່ນເຮືອນ ໄຊຍະຈັກ ຫົວໜ້າ ກສລ, ທ່ານ ໂກ່ ໄຊສົມບັດ, ເຈົ້າເມືອງໄຊຈຳພອນ, ທ່ານ ສົມສະຫງວນ ສຸວັນນະລາດ, ຫົວໜ້າ ພຊສ ແຂວງບໍລິຄຳໄຊ, ທ່ານ ແສງແກ້ວ ໃສມະນີ, ຮອງເຈົ້າເມືອງຄຳເກີດ, ທ່ານ ໃສຄຳ ທອງລັດ, ຮອງປະທານສະພາປະຊາຊົນ ແຂວງບໍລິຄຳໄຊ, ຕາງໜ້າບໍລິສັດຮຸ້ນສ່ວນລົງທຶນ ແລະ ພັດທະນາພະລັງງານ ຫວຽດ-ລາວ, ທີມງານທີ່ປຶກສາດ້ານສິ່ງແວດລ້ອມວິສະວະກຳສິ່ງແວດລ້ອມລາວ ຈຳກັດຜູ້ດຽວ, ພ້ອມດ້ວຍ ບັນດາ ຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ/ທ້ອງຖິ່ນ ແລະ ບ້ານທີ່ຢູ່ເຂດໂຄງການເຂົ້າຮ່ວມ.

ໂຄງການໄຟຟ້າພະລັງງານລົມ ເຈືອງເຊີນ ຕັ້ງຢູ່ເມືອງຄຳເກີດ ແລະ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ບໍລິສັດ ຮຸ້ນສ່ວນລົງທຶນ ແລະ ພັດທະນາພະລັງງານ ຫວຽດ-ລາວ (Viet Lao Energy Investment and Development Joint Stock) ກັບ ລັດຖະບານ ສປປ ລາວ ວັນທີ 11 ຕຸລາ 2023. ມີກຳລັງຕິດຕັ້ງໄຟຟ້າທັງໝົດ 600 ເມກາວັດ ຊຶ່ງເຈົ້າຂອງໂຄງການໄດ້ແບ່ງການພັດທະນາອອກເປັນ 2 ໄລຍະ (ແຜນພັດທະນາໂຄງການໄລຍະທີ 1 ກຳລັງຕິດຕັ້ງໄຟຟ້າ 250 (ສອງຮ້ອຍຫ້າສິບ) ເມກາວັດ, ຄາດຄະເນໃຫ້ໄດ້ຜະລິດກະແສໄຟຟ້າ ກ່ອນວັນທີ 31 ທັນວາ 2025 ແລະ ໄລຍະທີ 2 ກຳລັງຕິດຕັ້ງໄຟຟ້າ 350 ເມກາວັດ ຄາດຄະເນໃຫ້ໄດ້ຜະລິດກະແສໄຟຟ້າ ໃນທ້າຍປີ 2025-2030. ຂອບເຂດການສຶກສາໂຄງການ ມີພື້ນທີ່ທັງໝົດ 24.576 (ຊາວສີ່ພັນຫ້າຮ້ອຍເຈັດສິບຫົກ) ເຮັກຕາ ນອນໃນຂອບເຂດພື້ນທີ່ຂອງ 9 (ເກົ້າ) ບ້ານ ທີ່ຂຶ້ນກັບ 2 (ສອງ) ເມືອງ ຄື: ເມືອງໄຊຈຳພອນ ມີ 6 (ຫົກ) ບ້ານ ແລະ ເມືອງຄຳເກີດ ກວມເອົາ 3 (ສາມ) ບ້ານ ຄື: ບ້ານນາເຮືອງ, ບ້ານນາຫາດ ແລະ ບ້ານທົ່ງແປ). ຄາດຄະເນມູນຄ່າລົງທຶນໂຄງການປະມານ 536.513.218 (ຫ້າຮ້ອຍສາມສິບຫົກລ້ານ ຫ້າແສນສິບສາມພັນ ສອງຮ້ອຍສິບແປດ) ໂດລາສະຫະລັດ ຮູບແບບການລົງທຶນ ແມ່ນກໍ່ສ້າງ-ດຳເນີນງານ-ທຸລະກິດ (Build-Operation-Business) ໃນໄລຍະ 25 (ຊາວຫ້າ) ປີ ຕາມກົດໝາຍກຳນົດໄວ້.

ກອງປະຊຸມໃນຄັ້ງນີ້, ບັນດາຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຟັງການລາຍງານສະພາບລວມ, ປະຫວັດຄວາມເປັນມາ, ຮ່າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການດັ່ງກ່າວ. ຫຼັງຈາກນັ້ນ ໄດ້ມີຄຳຖາມເຈາະຈີ້ມ ແລະ ຄຳແນະນຳໃຫ້ໂຄງການດຳເນີນການປັບປຸງເອກະສານດັ່ງກ່າວ ເປັນຕົ້ນ ແມ່ນໃຫ້ຄົ້ນຄວ້າປັບປຸງຕື່ມ ຄື: 1) ໃຫ້ສົມທົບກັບກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອລົງສຳຫຼວດ ແລະ ເກັບຂໍ້ມູນເນື້ອທີ່ດິນປ່າໄມ້ໃນເຂດໂຄງການ ພ້ອມທັງສະເໜີການຫັນປ່ຽນທີ່ດິນປ່າໄມ້ໄປເປັນທີ່ດິນປະເພດອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25, 26 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ມາດຕາ 81, 82 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ຫຼັງຈາກໄດ້ຮັບການຢັ້ງຢືນຈາກກັບກົມປ່າໄມ້ ແລະ ກົມທີ່ດິນ ແລ້ວໃຫ້ນຳສົ່ງມາຍັງກົມສິ່ງແວດລ້ອມ ກ່ອນນຳສະເໜີການນຳ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ; 2); ໃຫ້ເຈົ້າຂອງໂຄງການສົມທົບກັບ

Log in or sign up for Facebook to connect with friends, famil...

Log In or Create new account

facebook Log In

ຄຸ້ມຄອງຊັບພະຍາກອນປ່າໄມ້ ໂດຍຈະບໍ່ອະນຸຍາດໃຫ້ດໍາເນີນການກິດຈະການອື່ນໆໃນເຂດດັ່ງກ່າວ ເປັນຕົ້ນ: ການຂຸດຄົ້ນບໍ່ແຮ່, ການກໍ່ສ້າງເສັ້ນທາງ ແລະ ອື່ນໆ; 6) ໃຫ້ກວດກາຄືນກ່ຽວກັບພື້ນທີ່ສໍາປະທານໂຄງການ ຈໍານວນ 24.000 ເຮັກຕາ ເພາະເຫັນວ່າກວມເອົາແຕ່ເມືອງຄໍາເກີດ ສ່ວນເມືອງໄຊຈໍາພອນ ແມ່ນບໍ່ມີເນື້ອທີ່ໂຄງການດັ່ງກ່າວ; 7) ໃຫ້ກວດກາຄືນກ່ຽວກັບການກໍ່ສ້າງໂຄງການດັ່ງກ່າວ ວ່າຈະມີຜົນກະທົບຕໍ່ກັບໂຄງການຊື້-ຂາຍ ສິນເຊື່ອຄາບອນ ຂອງລັດຖະບານ ໃນເຂດປ່າສະຫງວນແຫ່ງຊາດ ພູຈອມບອຍ, ປ່າປ້ອງກັນແຫ່ງຊາດ ນ້ຳຍ່ວງ-ນ້ຳມ່ວນ ແລະ ອຸທິ ຍານແຫ່ງຊາດ ນ້ຳເທີນ-ນາກາຍ.

ໃນຕອນທ້າຍ, ປະທານກອງປະຊຸມ ໄດ້ເນັ້ນໃຫ້ເຈົ້າຂອງໂຄງການ ເອົາໃຈໃສ່ປັບປຸງຮ່າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕາມຄໍາຄິດຄໍາເຫັນຂອງທຸກພາກສ່ວນໃນກອງປະຊຸມ ຄັ້ງນີ້ ແລະ ນໍາສົ່ງມາຍັງ ກຊສ  ເພື່ອດໍາເນີນການທົບທວນຕື່ມ ແລະ ພິຈາລະນາກ່ຽວກັບ ການສະເໜີອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ. ສິ່ງສໍາຄັນ ຖ້າເມື່ອໃດໂຄງການໄດ້ຮັບໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມແລ້ວ, ໂຄງການຕ້ອງປະຕິບັດມາດຕະການສິ່ງແວດລ້ອມ ດັ່ງທີ່ລະບຸໃນເອກະສານດັ່ງກ່າວ ຢ່າງເຂັ້ມງວດເພື່ອຫຼີກລ່ຽງບັນຫາຜົນກະທົບທີ່ຈະເກີດຂຶ້ນຕາມມາພາຍຫຼັງ.

ຂ່າວໂດຍ:  ພິກຸນທອງ ບຸນໃສ

----------------------------------------

ທ່ານສາມາດ ຕິດຕາມ ຂ່າວສານປະຊາສໍາພັນ ຂອງ ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໄດ້ທີ່:
Website: www.monre.gov.la
Facebook: www.facebook.com/monre.gov.la
Youtube: www.youtube.com/@monrelaopdr9573
ໂທລະສັບ: +856 21 263799

Log in or sign up for Facebook to connect with friends, famil...

Log In or Create new account

facebook Log In










+14

24 6

Like Comment

**Log in or sign up for Facebook to connect with friends, famil...**

Log In or Create new account